# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 8 ມັງກອນ 2017 (1-8-2017)

# ພຣະທັມຂອງພຣະເຈົ້າເປັນຄວາມຈິງ

*ມີຄວາມຈິງແປກປລາດທີ່ສຸດອັນໃດ ທີ່ທ່ານພົບວ່າເປັນຈິງ?*

**ຈຸດສຳຄັນໃນບົດຮຽນ**: ຂ້າພະເຈົ້າສາມາດໄວ້ວາງໃຈສິ່ງທີ່ພຣະຄັມພີສອນຢ່າງເຕັມປ່ຽມ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ທ່ານຮູ້ຈັກແລ້ວວ່ານີ່ງນີ້ວຍາວສ່ຳໃດ ແມ່ນບໍ່? ທ່ານອາດສາມາດຍົກນີ້ວມື ແລະນີ້ວໂປ້ຂອງທ່ານຂຶ້ນແລ້ວເວົ້າວ່າ, "ນີ່ງນີ້ວແມ່ນສ່ຳນີ້ແຫຼະ." ທ່ານອາດທຽບໄດ້ຢ່າງໃກ້ຄຽງ.

ໜ້າສົນໃຈເນາະ, ລວງຍາວຂອງໜຶ່ງນີ້ວ ກໍມັກຈະຖືເອົານີ້ວໂປ້ມືເປັນບັນທັດຖານ. ມີຄວາມໝາຍວ່າໜຶ່ງນີ້ວມີຄວາມກວ້າງເທົ່າກັບລວງກວ້າງຂອງນີ້ວໂປ້. ແຕ່ໃນເມື່ອນີ້ວໂປ້ຂອງຊ່າງໄມ້ຄົນນຶ່ງຕຸ້ຍກວ່ານີ້ວໂປ້ຂອງຊ່າງໄມ້ຄົນອື່ນກໍອາດຈະເກີດບັນຫາ. ນີ້ວໂປ້ເຫຼົ່ານັ້ນເປັນມາຕະຖານຈະໄດ້ບໍ່?

ສມັຍນີ້ ມາຕະຖານສາກົນສຳລັບນຶ່ງນີ້ວ ແມ່ນ 25.4 ຊັງຕີແມັດພໍດີ. ແລ້ວ ຍັງມີອີກວ່າ .0000017ຂອງນຶ່ງນີ້ວຍາວກວ່າອິມພີຣຽນນີ້ວ, ຊຶ່ງນິຍົມກັນໃຊ້ໃນປະເທດເຄືອຂ່າຍຂອງປະເທດອັງກິດ. ແລະສັ້ນກວ່ານຶ່ງນີ້ວຂອງສະຫະຣັດ .000002 ນີ້ວ. ດັ່ງນັ້ນ ມາຕະຖານຂອງນີ້ວຍັງບໍ່ຖືກຕ້ອງແມ່ນຢຳເລີຍ.

ໃນເມື່ອມີເຫດການສຳຄັນເຂົ້າມາໃນຊີວິດ, ພວກເຮົາຕ້ອງການມາຕະຖານທີ່ສົມບູນແບບທີ່ສຸດ ແລະເພິ່ງອາສັຍໄດ້ທີ່ສຸດ. ເພງສັຣເສີນ ບົດ 119 ບອກເຮົາວ່າ ມາຕະຖານນັ້ນປາກົດໃນພຣະຄຳຂອງພຣະເຈົ້າ.

**ພຣະຄັມພີກ່າວວ່າຢ່າງໃດ**: ເພງສັຣເສີນ 119:153-160 ( ເບິ່ງຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ເພງສັຣເສີນ 119:153-155</u>** :

*153 ຂໍພຣະອົງຫຼຽວເບິ່ງຄວາມທຸກທໍຣະມານຂອງຂ້ານ້ອຍ ແລະຊ່ອຍຂ້ານ້ອຍໃຫ້ພົ້ນພັຍດ້ວຍ ເພາະວ່າຂ້ານ້ອຍບໍ່ໄດ້ປະລະພຣະທັມຂອງພຣະອົງ. 154 ຂໍຊົງຊ່ອຍວ່າຄະດີຂອງຂ້ານ້ອຍ ແລະໃຫ້ຂ້ານ້ອຍເປັນອິສຣະ ຂໍຊົງໂຜດໃຫ້ຂ້ານ້ອຍມີຊີວິດຢູ່ຕໍ່ໄປຕາມທີ່ພຣະອົງຊົງສັນຍາໄວ້. 155 ຄົນຊົ່ວຮ້າຍຈະບໍ່ໄດ້ຮັບການຊ່ອຍເຫຼືອໃຫ້ພົ້ນ ເພາະເຂົາບໍ່ເຊື່ອຟັງພຣະທັມພຣະອົງ.*

ເມື່ອເພິ່ນໃກ້ຈະຈົບບົດຂອງເພງສັຣເສີນ, ຜູ້ຂຽນພຣະທັມເພງສັຣເສີນໄດ້ອ້ອນວອນພຣະເຈົ້າສອງຂໍ້:

- **"ພິຈາຣະນາຄວາມທຸກທໍຣະມານຂອງຂ້ານ້ອຍ."** ຜູ້ຂຽນເພງສັຣເສີນບໍ່ພຽງແຕ່ອ້ອນວອນໃຫ້ພຣະເຈົ້າສັງເກດເບິ່ງສິ່ງທີ່ເພິ່ນຈະຜ່ານຜ່າເທົ່ານັ້ນ ເພິ່ນຍັງທູນຂໍໃຫ້ພຣະເຈົ້າຫຼຽວເບິ່ງສະພາບການຂອງເພິ່ນດ້ວຍຄວາມເມດຕາ ແລະຫຼັງຈາກນັ້ນຂໍໃຫ້ກ້າວສູ່ການກະທຳບາງຢ່າງກັບສິ່ງນັ້ນ. ພວກເຮົາຮູ້ວ່າ ສິ່ງນີ້ເປັນຈິງເພາະຢູ່ໃນຄຳອ້ອນວອນຂໍ້ທີສອງຂອງເພິ່ນ.

- **"ຂໍຊົງຊ່ອຍກູ້ພັຍຂ້ານ້ອຍ."** ມີແຕ່ພຣະເຈົ້າເທົ່ານັ້ນທີ່ສາມາດປ່ຽນສະຖານການຂອງຜູ້ຂຽນເພງສັຣເສີນໄດ້. ຜູ້ຂຽນເພງສັຣເສີນວາງໃຈໃນພຣະສັນສັນຍາທີ່ພຣະເຈົ້າໄດ້ໃຫ້ໄວ້ໃນພຣະທັມພຣະອົງ; ດັ່ງນັ້ນ ເພິ່ນຈຶ່ງວາງໃຈວ່າພຣະເຈົ້າຈະຊ່ອຍກູ້ພັຍໃຫ້ເພິ່ນ.

ຜູ້ຂຽນເພງສັຣເສີນຊາບດີວ່າ ພຣະເຈົ້າພຽງຜູ້ດຽວທີ່ສາມາດໂຜດເພິ່ນໃຫ້ປອດພັຍ, ດັ່ງເພິ່ນອ້ອນວອນວ່າ,*"ຂໍຊົງຊ່ອຍວ່າຄະດີຂ້ານ້ອຍ ແລະຂໍຊົງໄຖ່ຂ້ານ້ອຍ."* ເພິ່ນເວົ້າຄືກັບວ່າເພິ່ນຢູ່ໃນສານທາງກົດໝາຍ, ຖືກກ່າວຫາວ່າກະທຳຄວາມຜິດ, ແລະຕ້ອງການທະນາຍຕໍ່ສູ້ ວ່າຄວາມຄະດີຂອງເພິ່ນ. ເພິ່ນຮ້ອງຫາອົງພຣະຜູ້ເປັນເຈົ້າ, ເໝືອນກັນກັບຜູ້ຂຽນເພງສັຣເສີນຄົນອື່ນໄດ້ທູນຂໍ ວ່າ: *" ໂອ້ພຣະເຈົ້າຂ້າ ຂໍພຣະອົງຊົງປະກາດຄວາມບໍຣິສຸດໃຈຂອງຂ້ານ້ອຍ ແລະຊ່ອຍຂ້ານ້ອຍໃນການຕໍ່ສູ້ຄະດີກັບຄົນອະທັມ ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກການຕົວະຍົວະຂອງຄົນຊົ່ວ" (ພສສ 43:1).*

ພຣະເຈົ້າຜູ້ຊົງວ່າຄະດີເຮົາ ແມ່ນພຣະເຈົ້າອົງດຽວກັນກັບພຣະຜູ້ຊົງໄຖ່ເຮົາ. ນີ້ແມ່ນຄວາມຫວັງທີ່ເຮົາມີໃນອົງພຣະຜູ້ເປັນເຈົ້າຄືພຣະເຢຊູຄຣິດ. ເຊັ່ນດຽວກັບພາບທີ່ໃຊ້ໃນສານ, ທ່ານອັຄສາວົກ ໂຢຮັນໄດ້ຂຽນໄວ້ວ່າ, *" ຖ້າຄົນໃດເຮັດຜິດ ພວກເຮົາກໍມີທະນາຍຄວາມ ຄືພຣະເຢຊູຄຣິດຜູ້ຊົງທ່ຽງທັມ ທີ່ສະຖິດຢູ່ກັບພຣະບິດາ" (1ຢຮ 2:1).*ພຣະເຢຊູຄືທະນາຍຜູ້ຊຶ່ງຈະເຮັດໃຫ້ເປັນໄປໄດ້ ໃຫ້ເຮົາມີອິຣະພາບສັມພັນກັບບັນລັງຍິ່ງໃຫຍ່. ພວກເຮົາພົບຄວາມຈິງນີ້ໃນພຣະທັມເຮັບເຣີທີ່ວ່າ: *"ເຫດສັນນັ້ນໃຫ້ເຮົາທັງຫຼາຍມີໃຈກ້າເຂົ້າໄປເຖິງພຣະທີ່ນັ່ງແຫ່ງພຣະຄຸນເພື່ອພວກເຮົາຈະໄດ້ຮັບພຣະເມດຕາ ແລະພົບພຣະຄຸນທີ່ຈະຊ່ອຍເຮົາໃນເວ ລາທີ່ຕ້ອງການ" (ຮຣ 4:16).*

ຂໍ້ 155 ສອນພວກເຮົາສອງຢ່າງກ່ຽວກັບສະພາບຂອງຄວາມພົ້ນ :

1. **ຄວາມພົ້ນຫ່າງໄກຈາກຄວາມຊົ່ວຮ້າຍ.** ພວກເຮົາບໍ່ສາມາດພົບກັບຄວາມພົ້ນໄດ້ ຕາບໃດເຮົາຍັງເກາະຕິດຢູ່ກັບຄວາມບາບ ແລະຄວາມຊົ່ວຮ້າຍຂອງເຮົາ.
2. **ຄວາມພົ້ນພົບຢູ່ໃນພຣະທັມພຣະເຈົ້າ.** ຜູ້ຂຽນເພງສັຣເສີນໄດ້ໃຫ້ເຫດຜົນໂດຍສະເພາະວ່າເຫດໃດຄວາມພົ້ນຈຶ່ງຫ່າງໄກຈາກຄວາມຊົ່ວຮ້າຍ: *"ເພາະເຂົາບໍ່ໄດ້ເຊື່ອຟັງພຣະທັມພຣະອົງ."* ຄວາມຈິງຄືພຣະອົງບໍ່ໄດ້ໂຜດເຮົາໃຫ້ພົ້ນ ຫາກຂັດຕໍ່ຄວາມປະສົງຂອງເຮົາ; ***ຄົນຈະບໍ່ໄປເຖິງສວັນໄດ້ ຖ້າເຂົາບໍ່ຢາກໄປຢູ່ບ່ອນນັ້ນ*** ພຣະຄັມພີຊີ້ໄປຫາພຣະເຢຊູ ພຣະທັມສູງສຸດ ແລະຊີ້ໃຫ້ພວກເຮົາເຫັນວ່າພວກເຮົາມີຊີວິດ ແລະຄວາມພົ້ນຢ່າງໃດໃນພຣະອົງ. ຖ້າພວກເຮົາຂາດການເອົາໃຈໃສ່ພຣະທັມນັ້ນ, ພວກເຮົາກໍຈະຖືກປະຖິ້ມໃຫ້ຢູ່ໃນຄວາມຊົ່ວຮ້າຍຂອງເຮົາ.

| ***ຂໍ້ພຣະຄຳເຫຼົ່ານີ້ໄດ້ສອນເຮົາກ່ຽວກັບຄວາມສັມພັນຂອງຜູ້ຂຽນເພງສັຣເສີນກັບພຣະເຈົ້າຢ່າງໃດ?*** |
|---|

## 2. <u>ເພງສັຣເສີນ 119:156-159</u>:

*156 ຂ້າແດ່ພຣະຜູ້ເປັນເຈົ້າ ຄວາມເມດຕາສົງສານຂອງພຣະອົງຊົງຍິ່ງໃຫຍ່ ຂໍຊົງຊ່ອຍໃຫ້ຂ້ານ້ອຍພົ້ນພັຍ ຕາມນ້ຳພຣະທັຍຂອງ*
*ພຣະອົງ. 157 ຂ້ານ້ອຍມີສັດຕຣູ ແລະ ມີຜູ້ຂົ່ມເຫັງຫຼາຍ ແຕ່ຂ້ານ້ອຍບໍ່ໄດ້ລະເລີຍໃນການເຊື່ອຟັງກົດຂໍ້ບັນຍັດຂອງພຣະອົງ.*
*158 ເມື່ອຂ້ານ້ອຍຫຼຽວເບິ່ງພວກທໍຣະຍົດນີ້ ຂ້ານ້ອຍກໍເບື່ອໜ່າຍເຕັມທົນ ເພາະວ່າພວກເຂົາບໍ່ເຊື່ອຟັງ ກົດຂໍ້ຄຳສັ່ງຂອງພຣະອົງ.*
*159 ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງຊົງຮູ້ແລ້ວວ່າຂ້ານ້ອຍມັກການສັ່ງສອນຂອງພຣະອົງຫຼາຍສ່ຳໃດ ຂໍຊົງໂຜດຊ່ອຍຂ້ານ້ອຍໃຫ້*
*ພົ້ນພັຍຕາມຄວາມຮັກໝັ້ນຄົງຂອງພຣະອົງເຖີ້ນ.*

ພຣະຄັມພີບໍ່ໄດ້ຊີ້ໃຫ້ເຮົາເຫັນພຽງແຕ່ຄວາມພົ້ນໃນພຣະຄຣິດເທົ່ານັ້ນ, ແຕ່ຍັງໄດ້ບອກພວກເຮົາວ່າເປັນຫຍັງພຣະອົງຈຶ່ງປະທານຄວາມພົ້ນໃຫ້ເຮົາ. *"ແຕ່ພຣະເຈົ້າຜູ້ປະກອບດ້ວຍພຣະກະຣຸນາອັນອຸດົມ ເພາະເຫດຄວາມຮັກອັນໃຫຍ່ຫຼວງທີ່ພຣະອົງຊົງຮັກພວກເຮົານັ້ນ" (ອຟຊ 2:4).*

ພຣະເຈົ້າຊົງຮັກ ແລະສົງສານເຮົາ, ບໍ່ແມ່ນຍ້ອນເຮົາດີ, ແຕ່ຍ້ອນພຣະອົງດີ. ໃນພຣະຄຸນຄວາມດີຂອງພຣະອົງ ພຣະອົງໄດ້

ປະທານຊີວິດໃຫ້ເຮົາ. ແລະໃນຄວາມຮັກຂອງພຣະອົງນັ້ນ, ພຣະອົງໄດ້ຊົງປະທານພຣະທັມຂອງພຣະອົງເພື່ອເສີມສ້າງ ແລະເສີມກຳລັງພວກເຮົາໃຫ້ເຂັ້ມແຂງຂຶ້ນ. ຜູ້ຂຽນເພງສັຣເສີນໄດ້ຂຽນໄວ້ວ່າ: *"ຂໍຊົງປະທານຊີວິດແກ່ຂ້ານ້ອຍຕາມການຕັດສິນຂອງພຣະອົງ."* ສະຖານະການຕ່າງໆ ຂອງຊີວິດອາດກະແທກເຮົາໃຫ້ລົ້ມລົງ, ແຕ່ພຣະທັມພຣະເຈົ້າຈະຊູເຮົາໃຫ້ລຸກຂຶ້ນໃໝ່.

| |
|---|
| ***ດົນປານໃດແລ້ວ ທີ່ທ່ານພົບກັບຄວາມຮັກ ແລະຄວາມເມດຕາຂອງພຣະເຈົ້າໃນທາງທີ່ມີຄວາມໝາຍທີ່ສຸດ?*** |

ຜູ້ຂຽນເພງສັຣເສີນຕ້ອງການພຣະເມດຕາອັນໃຫຍ່ຫຼວງຂອງພຣະເຈົ້າເພາະເພິ່ນມີສັດຕຣູຄູ່ຕໍ່ສູ້ຫຼາຍ. ເພິ່ນຮູ້ສຶກຄ້າຍກັບວ່າມີກອງທັບໃຫຍ່ລຸກຂຶ້ນຕໍ່ສູ້ເພິ່ນ. ເຫດສັນນັ້ນ ເພິ່ນຈຶ່ງຕັດສິນໃຈວ່າສັດຕຣູຂອງເພິ່ນບໍ່ອາດສາມາດຂັດຂວາງເພິ່ນຈາກການເຊື່ອຟັງພຣະທັມພຣະເຈົ້າໄດ້: *"ຂ້ານ້ອຍບໍ່ໄດ້ລະເລີຍຕໍ່ຂໍ້ຄຳສັ່ງຂອງພຣະອົງ."*

ຜູ້ຂຽນເພງສັຣເສີນໄດ້ໃຊ້ຖ້ອຍຄຳຮຸນແຮງຕໍ່ຕ້ານຄົນຊົ່ວຮ້າຍໃນຂໍ້ 158:*"ເບື່ອໜ່າຍ."* ເພິ່ນເອີ້ນເຂົາວ່າ *"ພວກທໍຣະຍົດ,"* ເພາະພວກເຂົາໄດ້ລະເມີດຄຳສັນຍາໃນຄວາມສັມພັນກັບພຣະເຈົ້າ. ເພິ່ນບໍ່ໄດ້ເສົ້າໃຈນຳເພາະພຽງແຕ່ການທໍຣະຍົດເທົ່ານັ້ນ, ແຕ່ເພິ່ນຮູ້ສຶກວ່າຖືກດູຖູກ ແລະລັງກຽດເພາະຄວາມດື້ດ້ານບໍ່ຍອມເຊື່ອຟັງພຣະທັມຂອງພຣະເຈົ້າຂອງເຂົາ.

ພວກເຮົາກໍເໝືອນກັນຄວນຮູ້ສຶກ "ເບື່ອໜ່າຍ" ເມື່ອເຮົາພົບເຫັນຄວາມບາບ ແລະບໍ່ເຊື່ອຟັງໃນຜູ້ອື່ນແຕ່ບໍ່ຄວນຈະເປັນໃນທຳນອງອວດດີ. ເມື່ອພວກເຮົາແນມເບິ່ງຜູ້ບໍ່ເຊື່ອ, ພວກເຮົາຄວນຈຳໄວ້ວ່າ ພຽງແຕ່ດ້ວຍພຣະຄຸນຂອງພຣະເຈົ້າເທົ່ານັ້ນ ພວກເຮົາຈຶ່ງບໍ່ໄດ້ຕົກຢູ່ໃນສະພາບຝ່າຍຈິດວິນຍານແບບດຽວກັບເຂົາ.

ໃນຂໍ້ 153, ຜູ້ຂຽນເພງສັຣເສີນໄດ້ໄຫວ້ວອນຂໍພຣະເຈົ້າໃຫ້ຫຼຽວເບິ່ງຄວາມທຸກທໍຣະມານຂອງເພິ່ນ. ໃນຂໍ້ 159, ເພິ່ນໄດ້ອ້ອນວອນຂໍພຣະເຈົ້າວ່າ "ພຣະອົງຊົງຊາບແລ້ວວ່າຂ້ານ້ອຍມັກການສັ່ງສອນຂອງພຣະອົງຫຼາຍສໍ່າໃດ." ຄວາມຮັກຕໍ່ຂໍ້ພຣະທັມ ແມ່ນການສະແດງຄວາມຈົງຮັກພັກດີຕໍ່ພຣະເຈົ້າ. ພວກເຮົາສາມາດເຊື່ອຟັງພຣະທັມພຣະເຈົ້າ ໂດຍປາສຈາກການຮັກກໍໄດ້, ແຕ່ພວກເຮົາບໍ່ສາມາດຮັກພຣະທັມຂອງພຣະອົງໂດຍປາສຈາກການອຸທິດຕົນໃຫ້ພຣະທັມຈົນໝົດສິ້ນ ຕໍ່ການຮຽນແລະການດຳຣົງຊີວິດໃນພຣະທັມນັ້ນ.

ເພງສັຣເສີນບົດ 119 ທັງໝົດ ສັຣເສີນຄວາມອຸດົມສົມບູນຂອງຂໍ້ພຣະທັມວ່າ ພຽງພໍສຳລັບທຸກໆສິ່ງໃນຊີວິດ. ພວກເຮົາຕ້ອງການພຣະທັມຂອງພຣະເຈົ້າ. ສຳຄັນຍິ່ງໄປກວ່ານັ້ນແມ່ນ, ພວກເຮົາຕ້ອງການພຣະເຈົ້າຜູ້ເປັນຂອງພຣະທັມ. ພຣະຄັມພີບໍ່ແມ່ນປື້ມວິຊາເລກທີ່ປະກອບດ້ວຍສູດຕ່າງໆ(formulars)ພວກເຮົາຕ້ອງພິສູດຫາຊີວິດພຣະອາຈານ. ຊຶ່ງແມ່ນເຣື່ອງຄວາມຮັກທີ່ພຣະເຈົ້າເປັນຜູ້ຮັກ ແລະພວກເຮົາເປັນຜູ້ທີ່ຖືກພຣະເຈົ້າຮັກ. ມີແຕ່ຜູ້ຮຽນຮູ້ເຣື່ອງຄວາມຮັກຈຶ່ງຈະພົບກັບຣິດອຳນາດການປ່ຽນແປງຊີວິດຂອງພຣະທັມ.

| |
|---|
| ***ພວກເຮົາສາມາດຍົກສູງຄວາມຈິງໃນພຣະທັມພຣະເຈົ້າໄດ້ຢ່າງໃດ ໃນເມື່ອເຮົາຍື່ນມິຕະພາບໃຫ້ຄົນທີ່ປະຕິເສດ?*** |

**3. <u>ເພງສັຣເສີນ 119:60</u>**:

*[160] ແກ່ນແທ້ຂອງພຣະທັມເປັນຄວາມຈິງ ແລະ ກົດຣະບຽບອັນສັດຈິງທັງໝົດຂອງພຣະອົງຊົງເປັນຢູ່ຕລອດໄປ.*

ຂໍ້ປິດທ້າຍຂອງເພງສັຣເສີນບົດນີ້ຢືນຢັນຄວາມຈິງເຕັມປ່ຽມຂອງພຣະທັມພຣະເຈົ້າ. ເພື່ອຈະອາສັຍພຣະຄັມພີຢ່າງແທ້ຈິງນັ້ນ, ພວກເຮົາຕ້ອງວາງໃຈຢ່າງແທ້ຈິງ, ດັ່ງດຽວກັບຜູ້ຂຽນເພງສັຣເສີນໄດ້ວາງໃຈນັ້ນ.

- **ວາງໃຈວ່າພຣະທັມຂອງພຣະເຈົ້າເປັນຈິງ.** ຂໍ້ພຣະທັມບໍ່ໄດ້ບັນຈຸພຽງແຕ່ຄວາມຈິງເທົ່ານັ້ນ. ແມ່ນແຕ່ຮ້ານຂາຍໜັງສືຍັງສາມາດບັນຈຸຄວາມຈິງພຽງບາງສ່ວນ. ຕລອດຂໍ້ພຣະທັມ ລວມພຣະທັມທັງໝົດ ແລະບໍ່ມີການຍົກເວັ້ນ ເປັນຈິງຢ່າງສົມບູນແບບ ແລະແນ່ນອນທີ່ສຸດ. ພຣະຄັມພີບໍ່ໄດ້ບັນຈຸພາບຄວາມບໍ່ຈິງ. ຫຼັກຄຳສອນທຸກຂໍ້, ຄຳທຳນວາຍທຸກຄຳ, ຄຳສັນຍາທຸກ

ຖ້ອຍຄຳລ້ວນແຕ່ເປັນຈິງ. ບາງຕອນ ແລະທັງໝົດຂອງພຣະທັມພຣະເຈົ້າເປັນຈິງ. ດັ່ງທີ່ອັຄສາວົກໂປໂລໄດ້ຂຽນໄວ້ວ່າ: "ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ, ການກ່າວຕັກເຕືອນວ່າກ່າວ, ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ, ເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ (2 ຕມທ 3:16-17).

➢ **ຈົ່ງວາງໃຈວ່າພຣະທັມຂອງພຣະເຈົ້າເປັນຢູ່ຕລອດໄປ.** ຜູ້ທຳນວາຍເອຊາຢາ ກໍໄດ້ຢືນຢັນຖ້ອຍຄຳຂອງຜູ້ຂຽນເພງສັຣເສີນວ່າ: "ແມ່ນແລ້ວ ຫຍ້າກໍຫ່ຽວແຫ້ງແລະດອກໄມ້ກໍຮ່ວງໂຣຍ ແຕ່ພຣະທັມແຫ່ງພຣະເຈົ້າຂອງເຮົາຈະມີຢູ່ຕລອດໄປ" (ອຊຢ 40:8). ຂໍ້ພຣະທັມບໍ່ຈຳເປັນຕ້ອງປັບປຸງແກ້ໄຂຕາມຍຸກສມັຍ; ພຣະຄັມພີແມ່ນປື້ມສຳລັບທຸກຍຸກທຸກສມັຍ. ຄວາມຈິງບໍ່ປ່ຽນແປງ, ແລະຄວາມຈິງແຫ່ງພຣະທັມພຣະເຈົ້າຍັງກ່ຽວພັນ ແລະຊົງຣິດອຳນາດໃນສມັຍນີ້ ດັ່ງດຽວກັບຕອນເລີ້ມຂຽນທີແລກ ແລະຈະເປັນດັ່ງນັ້ນຕໍ່ໆໄປ. ຜົນຕາມມາກໍຄື, ພວກເຮົາສາມາດວາງໃຈຄວາມຈິງນີຮັບວ່າຈະມີອິດທິຣິດ ເກີດຜົນດີໃນຊີວິດເຮົາ. "ຖ້ອຍຄຳຂອງເຮົາເປັນເໝືອນຫິມະແລະນ້ຳຝົນຊຶ່ງລົງມາຈາກຟ້າແລະທົດໂລກໃຫ້ຊຸ່ມຊື່ນແລ້ວກັບຄືນຂື້ນສູ່ຟ້າສວັນ ມັນສາມາດເຮັດໃຫ້ເຄື່ອງປູກຈະເຣີນງອກງາມຂຶ້ນ ມັນສາມາດໃຫ້ເມັດສຳລັບຫວ່ານ ແລະໃຫ້ອາຫານສຳລັບກິນ ຖ້ອຍຄຳທີ່ເຮົາເວົ້າໄປນັ້ນ ຈະເຮັດໃຫ້ສຳເຣັດຜົນຕາມທີ່ເຮົາວາງໄວ້ ຈະເຮັດໃຫ້ທຸກສິ່ງຕາມທີ່ເຮົາໃຊ້ໄປເຮັດ ແລະກັບຄືນມາຫາເຮົາ" (ອຊຢ 55:10-11).

ພຣະຄັມພີແມ່ນຂ່າວສານ ມີຣິດເດດ, ສາມາດປ່ຽນແປງ, ແລະອັສຈັນ ຂຽນຂຶ້ນໂດຍພຣະເຈົ້າເອງ. ດັ່ງນັ້ນ ພວກທ່ານສາມາດເພິ່ງອາສັຍທຸກສິ່ງທີ່ໄດ້ກ່າວໄວ້ສຳລັບທຸກຊ່ວງເວລາຂອງຊີວິດທ່ານ.

| |
|---|
| *ມີຜົນຫຍັງຕາມມາຈາກການເຊື່ອວ່າພຣະທັມພຣະເຈົ້າທີ່ເປັນຈິງ ?* |

## ນຳໃຊ້ໃນຊີວິດ

ພຣະທັມຂອງພຣະເຈົ້າເປັນຈິງ. ຄວາມຈິງນີ້ຈະມີຜົນກະທົບຕໍ່ການກະທຳແລະອຸປນິສັຍຂອງທ່ານຢ່າງໃດໃນອາທິດນີ້? ຈົ່ງພິຈາຣະນາເບິ່ງຄຳແນະນຳຕໍ່ໄປນີ້:

➢ **ຄວາມຈິງຕ້ອງເພິ່ງອາສັຍ.** ຂະນະທີ່ທ່ານອ່ານພຣະທັມພຣະເຈົ້າໃນອາທິດໜ້າ, ຈົ່ງຂຽນຄວາມຈິງທີ່ທ່ານພົບພໍ້ລົງ. ສ້າງບົດບັນທຶກຄວາມຈິງທີ່ທ່ານເພິ່ງອາສັຍໄດ້ໃນແຕ່ລະວັນ.

➢ **ຄວາມຈິງຕ້ອງສຶກສາ.** ອຸທິດຕົນ ເປັນນັກຮຽນພຣະທັມພຣະເຈົ້າຕລອດຊົ່ວຊີວິດ. ອາທິດນີ້ ຈົ່ງເລືອກແລະສຸມໃສ່ປື້ມເຫຼັ້ມນຶ່ງຂອງພຣະຄັມພີທີ່ທ່ານບໍ່ເຄີຍສຶກສາມາກ່ອນ. ຈົ່ງພິຈາຣະນາໃຊ້ປື້ມບັນຍາຍ(commentary)ສຳລັບເຫຼັ້ມນັ້ນໃນຂະນະທີ່ທ່ານຂຸດຄົ້ນຫາໃຈຄວາມໃນເຣື່ອງນັ້ນ.

➢ **ຄວາມຈິງຕ້ອງເລົ່າ.** ຈົ່ງພິຈາຣະນາການຂຍາຍຜົນຮັບຈາກການສຶກສາພຣະຄັມພີກຸ່ມຂອງທ່ານ (ແລະຄຣິສຕະຈັກຂອງທ່ານ)ໂດຍການຂຍາຍສາຂາອອກໄປເພື່ອເລີ້ມສິ່ງໃໝ່ຂຶ້ນ. ຈົ່ງໄປຫາຄົນຢູ່ໃນຄຸ້ມຂອງທ່ານ ຫຼືສະເພາະບຸກຄົນທີ່ສັງກັດໃນໂບດຂອງທ່ານ, ແລ້ວຊ່ອຍສະມາຊິກໃໝ່ຂຸດຄົ້ນເລິກລົງໄປໃນພຣະທັມພຣະເຈົ້າ.

ຢ່າພະຍາຍາມຕິດຕາມ "ກົດຂອງນີ້ວໂປ້" "rule of thumb" ສຳລັບຊີວິດທ່ານມາຕະຖານທີ່ປ່ຽນຈາກບຸກຄົນຫາບຸກຄົນ ແທນທີ່ຈະຕາມສິ່ງນັ້ນ ຈົ່ງຫັນມາໃຊ້ມາຕະຖານອັນສົມບູນຂອງພຣະທັມພຣະເຈົ້າເພື່ອວັດແທກແຕ່ລະໄລຍະຂອງຊີວິດທ່ານ.

**ອຸປຖັມໂດຍ ລາວຊາວເທິນບັບຕິສສັມພັນ www.lsbf.org ໂດຍ PSI**